ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

ລັດຖະບານ

ເລກທີ: 327 /ລບ

ນະຄອນຫຼວງວຽງຈັນ, ວັນທີ 16-9-2014

# ດຳລັດ

## ວ່າດ້ວຍ ການຄຸ້ມຄອງ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/5/2003;
- ອີງຕາມກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ) ສະບັບເລກທີ 09/ສພ, ລົງວັນທີ 21/12/2011;
- ອີງຕາມໜັງສືສະເໜີ ຂອງລັດຖະມົນຕີວ່າການ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 1760/ ປທສ ລົງວັນທີ 12 ກໍລະກົດ 2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ເພື່ອຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແນໃສ່ປົກປ້ອງກຽດສັກສີ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ໃຫ້ບໍລິການ, ຜູ້ໃຊ້ບໍລິການ ແລະ ສັງຄົມປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ.

### ມາດຕາ 2 ການຄຸ້ມຄອງ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ

ການຄຸ້ມຄອງ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ແມ່ນການຕິດຕາມ, ກວດກາການເຄື່ອນໄຫວ, ຕ້ານ ແລະ ສະກັດກັ້ນການນຳໃຊ້ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ທີ່ເປັນໄພແກ່ສັງຄົມ ແລະ ຄວາມໝັ້ນຄົງຂອງຊາດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຂໍ້ມູນຂ່າວສານ** ໝາຍເຖິງ ຂໍ້ຄວາມທີ່ເປັນຕົວເລກ, ຕົວອັກສອນ, ຮູບພາບເໜັງຕີງ, ບໍ່ເໜັງຕີງ, ສຽງ, ວິດີໂອ ແລະ ອື່ນໆ;

2. **ສື່ສັງຄົມ** (Social media) ໝາຍເຖິງ ຮູບແບບການສື່ສານ ແລະ ການເຜີຍແຜ່ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ, ຊຶ່ງບຸກຄົນທົ່ວໄປສາມາດນຳສະເໜີ, ສົ່ງ, ຮັບ, ສົ່ງຕໍ່, ມີຄຳເຫັນ ຕໍ່ເນື້ອໃນຂໍ້ມູນຂ່າວສານ, ເປັນຕົ້ນ: ເຟສບຸກ, ທວິດເຕີ, ຢູທູບ ແລະ ອື່ນໆ;

3. **ໜ້າເວັບ** (Web page) ໝາຍເຖິງ ກະດານຂ່າວ ເອເລັກໂຕຣນິກ ທີ່ນຳສະເໜີໃນຮູບແບບສັນຍາລັກ, ຕົວເລກ, ຕົວໜັງສື, ຮູບພາບເໜັງຕີງ, ບໍ່ເໜັງຕີງ, ວິດີໂອ, ສຽງ ແລະ ຮູບແບບອື່ນໆ ຜ່ານອິນເຕີເນັດ;

4. **ເວັບໄຊ** ໝາຍເຖິງ ລະບົບຂໍ້ມູນຂ່າວສານ ທີ່ສ້າງຂຶ້ນເປັນໜຶ່ງ ຫຼື ຫຼາຍໜ້າເວັບ;

5. **ທະບຽນສ່ວນຕົວໃນສື່ສັງຄົມ** ໝາຍເຖິງ ໜ້າເວັບທີ່ໄດ້ສ້າງຂຶ້ນໂດຍຜ່ານສື່ສັງຄົມ ຊຶ່ງຜູ້ລົງທະບຽນ ຫຼື ອົງການຈັດຕັ້ງ ເປັນເຈົ້າຂອງໜ້າເວັບນັ້ນ ແລະ ເປັນຜູ້ຄຸ້ມຄອງເນື້ອໃນຂໍ້ມູນຂ່າວສານເອງ ຕົວຢ່າງ: www.facebook.com/champa;

6. **ຜູ້ໃຫ້ບໍລິການອິນເຕີເນັດ** ໝາຍເຖິງ ຜູ້ໃຫ້ບໍລິການ ເຊື່ອມຕໍ່ອິນເຕີເນັດ ໃຫ້ແກ່ ຜູ້ໃຊ້ບໍລິການ ສາມາດເຊື່ອມຕໍ່ ເຂົ້າຫາ ອິນເຕີເນັດໄດ້;

7. **ຜູ້ຄຸ້ມຄອງ ເວັບໄຊ** ໝາຍເຖິງ ຜູ້ມີສິດເຂົ້າໃນລະບົບຢ່າງຖືກຕ້ອງ ເພື່ອສ້າງ, ດັດແກ້, ປັບປຸງ ແລະ ລຶບລະບົບເຕັກນິກ ແລະ ເນື້ອໃນຂອງເວັບໄຊ;

8. **ຄວາມປອດໄພ ໃນການນຳໃຊ້ຂໍ້ມູນ ຂ່າວສານ** ໝາຍເຖິງ ການຮັກສາຂໍ້ມູນຂ່າວສານ ແລະ ລະບົບຂໍ້ມູນຂ່າວສານ ໃຫ້ປັດສະຈາກ ການຖືກເຊື່ອມຕໍ່, ການນຳໃຊ້, ການທຳລາຍ ແລະ ການປອມແປງຢ່າງຜິດກົດໝາຍ;

9. **ຜູ້ໃຊ້ບໍລິການອິນເຕີເນັດ** ໝາຍເຖິງ ບຸກຄົນ ທີ່ເຊື່ອມຕໍ່ເຂົ້າຫາ ອິນເຕີເນັດ ໃນຮູບແບບຕ່າງໆ ເພື່ອອ່ານ, ຂຽນ, ສົ່ງ, ສົ່ງຕໍ່ ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບ ການນຳໃຊ້ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ**

ລັດສົ່ງເສີມ ແລະ ຊຸກຍູ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວວຽກງານຢູ່ ສປປ ລາວ ນຳໃຊ້ຂໍ້ມູນຂ່າວສານ ຜ່ານອິນເຕີເນັດ ເຂົ້າໃນການເຄື່ອນໄຫວທາງດ້ານເສດຖະກິດ-ສັງຄົມ ໂດຍສະເພາະ ໃນຂະແໜງການສຶກສາ, ສາທາລະນະສຸກ, ການຄົ້ນຄ້ວາວິໄຈທາງວິທະຍາສາດ, ເຕັກໂນໂລຊີ ເພື່ອເພີ່ມປະສິດທິພາບ, ຄຸນນະພາບໃນການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ.

ລັດສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ນຳໃຊ້ ລະຫັດຊື່ອິນເຕີເນັດ ແຫ່ງຊາດລາວ (.LA) ຢ່າງກ້ວາງຂວາງ ພ້ອມທັງ ຫັນໄປສູ່ການນຳໃຊ້ ເຕັກໂນໂລຊີເລກໝາຍອິນເຕີເນັດຍຸກໃໝ່ (IPV6), ສ້າງໂປຼແກຼມເປັນພາສາລາວ, ສ້າງເວັບໄຊ ແລະ ເຄືອຂ່າຍສັງຄົມອອນລາຍ ທີ່ເຄື່ອນໄຫວຖືກຕ້ອງ ຕາມລະບຽບກົດໝາຍຂອງ ສປປ ລາວ.